CARE International in Lao PDR, Nongsangthor Road, Ban Nongsangthor, Saysettha District, Vientiane Capital Lao PDR, P.O Box: 4328, Tel: (856-21) 217 727, 212 991, Fax: (856-21) 217 727, E-mail: Lao.info@care.org

# Press Release

**Ministry of Agriculture and Forestry and CARE International in Lao PDR Sign MOU to Empower Women Leaders in Climate Adaptation**

***Vientiane Capital, Lao PDR — on 8 July 2025*** — The Ministry of Agriculture and Environment represented by the Salavan Provincial Department of Agriculture and Forestry, and CARE International in Lao PDR signed a Memorandum of Understanding (MOU) to launch the **"She Grows the Future: Women Leaders in Climate Change Adaptation in Laos"** project. Supported by the **Agence Française de Développement (AFD)**, the initiative will run from the date of approval until 31 July 2027. The MOU signing ceremony was held in Vientiane Capital on 8 July 2025.

This partnership strengthens CARE's commitment to the empowerment of women and girls, resilience, and sustainable development in Lao PDR by centering women's leadership in climate adaptation and environmental protection effort.

Through this initiative, the project will strengthen rural women's knowledge, resilience, and opportunities for collective action to adapt to climate change and preserve ecosystems. This initiative will build a network of skilled partners dedicated to **climate adaptation** and **conservation**. Together, they'll challenge harmful norms to create real change for **women and girls** at every level. These initiatives will promote women's participation and development while addressing discrimination and violence against women and girls through transformative, community-led actions.

The project will directly reach 780 individuals, including 540 women, across 12 villages in Lao Ngarm District, Salavan Province, with a particular focus on ethnic communities. It will also engage key stakeholders, including representatives from district and provincial government offices, community leaders, and members of women and girls' empowerment and agroecology alliance learning networks. These actors will take part in training, coordination, and policy advocacy efforts. Indirect beneficiaries include the families of participating women and approximately 4,000 farmers in surrounding communities who will benefit from knowledge-sharing and improved practices.

The overall aim of the project is a regional effort to accelerate the implementation of women- and girls-inclusive climate adaptation policies and practices in four countries including Laos, Vietnam, Peru and Ecuador, beginning with locally driven actions in Lao PDR that elevate the role of women in climate resilience and community governance.

CARE works globally to end poverty and achieve social justice. In Lao PDR, CARE partners with communities, government agencies, and civil society to empower vulnerable populations—especially women and girls—through inclusive development and resilience-building. Learn more at www.careint.org.la.

CARE International in Lao PDR, Nongsangthor Road, Ban Nongsangthor, Saysettha District, Vientiane Capital Lao PDR, P.O Box: 4328, Tel: (856-21) 217 727, 212 991, Fax: (856-21) 217 727, E-mail: Lao.info@care.org

# ບົດຂ່າວ

## ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ລົງນາມ ບົດບັນທຶກຄວາມເຂົ້າໃຈ ໂຄງການ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການມີສ່ວນຮ່ວມຂອງແມ່ຍິງ

***ນະຄອນຫຼວງວຽງຈັນ, ສປປ ລາວ — ວັນທີ 8 ກໍລະກົດ 2025***, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຕາງໜ້າໂດຍ ພະແນກກະສິກຳ ແລະ ປ່າໄມ້ ແຂວງສາລະວັນ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອເປີດຕົວ **"ໂຄງການ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການມີສ່ວນຮ່ວມຂອງແມ່ຍິງ"**. ໂດຍໄດ້ຮັບການສະໜັບສະໜູນທຶນຈາກ **ອົງການຝຣັ່ງເພື່ອການພັດທະນາ (AFD)**, ໂຄງການດັ່ງກ່າວຈະໄດ້ດຳເນີນໄປຕັ້ງແຕ່ມື້ໄດ້ຮັບອະນຸມັດ ຈົນເຖິງ ວັນທີ 31 ກໍລະກົດ 2027. ພິທີລົງນາມ MOU ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນໃນວັນທີ 8 ກໍລະກົດ 2025.

ການຮ່ວມມືນີ້ໄດ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ ອົງການແຄຣ໌ ຕໍ່ກັບການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ເດັກ, ຄວາມທົນທານ ແລະ ການພັດທະນາແບບຍືນຍົງໃນ ສປປ ລາວ ໂດຍການເປັນໃຈກາງຂອງແມ່ຍິງໃນການປັບຕົວເຂົ້າກັບດິນຟ້າອາກາດ ແລະ ຄວາມພະຍາຍາມປົກປັກຮັກສາສິ່ງແວດລ້ອມ.

ໂດຍຜ່ານຂໍ້ລິເລີ່ມນີ້, ທາງໂຄງການຈະສ້າງຄວາມເຂັ້ມແຂງ ແລະ ເປີດໂອກາດໃຫ້ແກ່ແມ່ຍິງເຂດຊົນນະບົດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການອະນຸລັກລະບົບນິເວດ ໂດຍຈະສ້າງເຄືອຂ່າຍຂອງຄູ່ຮ່ວມງານທີ່ມີຄວາມຊໍານິຊໍານານໃນວຽກງານການປັບຕົວ ແລະ ປົກປັກຮັກສາສະພາບດິນຟ້າອາກາດ. ການເຮັດວຽກຮ່ວມກັນ, ພວກເຂົາຈະສາມາດແກ້ໄຂບັນຫາດຖານທີ່ເປັນອັນຕະລາຍໄດ້ ເພື່ອສ້າງການປ່ຽນແປງທີ່ແທ້ຈິງສຳລັບແມ່ຍິງ ແລະ ເດັກໃນທຸກລະດັບ ແລະ ສົ່ງເສີມການມີສ່ວນຮ່ວມ ແລະ ການພັດທະນາຂອງແມ່ຍິງ ເພື່ອແກ້ໄຂໃນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ຜ່ານການຈັດຕັ້ງປະຕິບັດທີ່ນຳພາໂດຍຊຸມຊົນ.

ຜູ້ໄດ້ຮັບຜົນປະໂຫຍດໂດຍກົງຈາກໂຄງການນີ້ແມ່ນປະຊາຊົນຢູ່ພາຍໃນ 12 ບ້ານເປົ້າໝາຍ ຂອງເມືອງເລົ່າງາມ ໃນຈຳນວນ 780 ທ່ານ, ຍິງ 540 ທ່ານ; ໂດຍກຸ່ມເປົ້າໝາຍຫຼັກແມ່ນເລັ່ງໃສ່ແມ່ຍິງຊົນເຜົ່າ. ນອກຈາກນີ້, ຍັງມີສະມາຊິກເຄືອຄ່າຍແມ່ຍິງ ແລະ ເດັກ ແລະ ລະບົບນິເວດກະສິກຳໃນລາວ, ຜູ້ປະສານງານພະນັກງານຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ, ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນຊຸມຊົນ ໂດຍຜູ້ໄດ້ຮັບຜົນປະໂຫຍດເຫຼົ່ານີ້ຈະໄດ້ເຂົ້າຮ່ວມໃນການຝຶກອົບຮົມ, ການປະສານງານ ແລະ ກິດຈະກຳສົ່ງເສີມນະໂຍບາຍຕ່າງໆ ໂດຍຜູ້ໄດ້ຮັບຜົນປະໂຫຍດທາງອ້ອມລວມມີຄອບຄົວຂອງແມ່ຍິງທີ່ເຂົ້າຮ່ວມ ແລະ ຊາວກະສິກອນປະມານ 4,000 ຄົນໃນຊຸມຊົນອ້ອມຂ້າງ ເຊິ່ງຈະໄດ້ຮັບຜົນປະໂຫຍດຈາກການແບ່ງປັນຄວາມຮູ້ ແລະ ການປັບປຸງການປະຕິບັດ.

ເປົ້າໝາຍລວມຂອງໂຄງການດັ່ງກ່າວແມ່ນຄວາມພະຍາຍາມຂອງລະດັບພາກພື້ນເພື່ອເລັ່ງລັດໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ແນວທາງການປັບຕົວໃຫ້ເຂົ້າກັບສະພາບດິນຟ້າອາກາດທີ່ກ່ຽວຂ້ອງກັບແມ່ຍິງ ແລະ ເດັກ ຢູ່ໃນ 4 ປະເທດຄື: ລາວ, ຫວຽດນາມ, ເປຣູ ແລະ ເອກວາດໍ, ເລີ່ມຕົ້ນດ້ວຍການຈັດຕັ້ງປະຕິບັດການຂັບເຄື່ອນໃນຂັ້ນທ້ອງຖິ່ນ ສປປ ລາວ ທີ່ຍົກສູງບົດບາດຂອງແມ່ຍິງໃນການທົນທານຕໍ່ສະພາບດິນຟ້າອາກາດ ແລະ ການຄຸ້ມຄອງຊຸມຊົນ.

ອົງການແຄຣ໌ ເຮັດວຽກຢູໃນທົ່ວໂລກເພື່ອລຶບລ້າງຄວາມທຸກຍາກໃຫ້ບັນລຸຄວາມຍຸດຕິທຳທາງສັງຄົມ. ໃນ ສປປ ລາວ, ອົງການແຄຣ໌ ໄດ້ເຮັດວຽກຮ່ວມກັບຊຸມຊົນ, ລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກກະຊົນ ເພື່ອສ້າງຄວາມເຂັ້ມແຂງໃຫ້ກຸ່ມຄົນທີ່ມີຄວາມສ່ຽງໂດຍສະເພາະແມ່ຍິງ ແລະ ເດັກ - ໂດຍຜ່ານການພັດທະນາແບບມີສ່ວນຮ່ວມ ແລະ ການສ້າງຄວາມທົນທານ. ສາມາດສຶກສາຂໍ້ມູນເພີ່ມເຕີມໄດ້ທີ່ www.careint.org.la